# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 10 ມັງກອນ 2021 (01-10-2021)

## ວັນຕົກຕໍ່າ

*ສິ່ງໃດຍົກຊູວິນຍານທ່ານຂຶ້ນໃນເມື່ອທ່ານຕົກຕໍ່າລົງ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຍົກຊູເຮົາຂຶ້ນເມື່ອເຮົາຮູ້ສຶກຕົກຕໍ່າອ່ອນກຳລັງລົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ.** ບາງຄັ້ງພວກເຮົາກໍຕົກຕໍ່າອ່ອນກຳລັງໃຈ. ຂ້າພະເຈົ້າບໍ່ໄດ້ໝາຍເຖິງຄວາມຊຶມເສົ້າຜ່ານທາງການແພດ-ຊຶ່ງມັນແຕກຕ່າງກັນຢ່າງສິ້ນເຊີງ. ບາງຄົນເອີ້ນມັນວ່າມື້ຕົກຕໍ່າ, ທົດຊ່ວງ, ຫຼືໝົ່ນໝອງ, ຈະເອີ້ນຢ່າງໃດກໍສຸດແລ້ວ, ແຕ່ເຮົາເອີ້ນມັນວ່າ, ພວກເຮົາເຮັດບໍ່ໄດ້ດີທີ່ສຸດໃນມື້ນັ້ນ.

ມັງກອນ 18, 2021, ບົ່ງບອກວ່າເປັນວັນຈັນສີມູ່ຍ (Blue Monday), ວັນຕົກຕໍ່າສຸດຂອງລອບປີ. ນານສິບຫ້າປີມາຮອດດຽວນີ້, ວັນຈັນທີສາມບົ່ງບອກວ່າເປັນວັນຕົກຕໍ່າທີ່ສຸດ ເພາະຄວາມຕື່ນເຕັ້ນຂອງວັນຄຣິສມາດຜ່ານພົ້ນໄປຍົກໆ; ມີຫຼາຍຄົນຫຼົ້ມເຫຼວຕໍ່ແຜນງານສຳລັບປີໃໝ່ຂອງພວກເຂົາແລ້ວໃນຈຸດນີ້; ພວກເຂົາກຳລັງປະເຊີນກັບບິນແລະໜີ້ສິນທີ່ຄູນຂຶ້ນໃນເທສການຄຣິສມາດ; ແລະອາກາດກໍຍັງໜາວຈັດຢູ່.

ຄອບຄົວແລະໝູ່ເພື່ອນທີ່ມີເຈຕນາດີກໍຈະພຍາຍາມ "ເວົ້າໜູນໃຈ" ໃຫ້ອອກຈາກຄວາມຮູ້ສຶກຂອງພວກເຮົາ."ເຈົ້າຈະໂສກເສົ້າເສັຍໃຈເຮັດຫຍັງ?!" "ເຈົ້າກໍປີ້ນຂ້ວມມັນສາ." ໃນປະສົບການຫຼາຍຢ່າງຜ່ານມາ, ຄຳເວົ້າຊ້ຳຊາກເຫຼົ່ານັ້ນບໍ່ຊ່ອຍຫັຽງເລີຍ. ແຕ່ບັນຫາຕ່າງໆຍັງຄ້າງຄາຢູ່. ເຮົາຈະເຮັດຈັ່ງໃດໃນເມື່ອສີມູ່ຍນີ້ເກີດຂຶ້ນກັບເຮົາ?

ກະສັດດາວິດໄດ້ຂຽນເພງສັຣເສີນທີ່ວິເສດຫຼາຍເພງ, ແຕ່ເພິ່ນກໍໄດ້ຂຽນເພງທີ່ສະທ້ອນເຖິງບັນຫາຈິດວິນຍານນາໆປະການຂອງເພິ່ນດ້ວຍ. ຜ່ານຄຳເວົ້າຂອງເພິ່ນໃນເພງສັຣເສີນ 31, ພວກເຮົາໄດ້ພົບຄຳຕອບທີ່ດີທີ່ສຸດຕໍ່ສີມູ່ຍ.

**ພຣະຄັມພີກ່າວວ່າແນວໃດ :** ( ເບິ່ງຕາມຂໍ້ 1, 2, ແລະ 3, )

### ການສຶກສາພຣະຄັມພີ

### 1. <u>ເພງສັຣເສີນ 31:1-2</u>.

*[1]ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍມາເພິ່ງອາສັຍພຣະອົງ ຂໍຢ່າໃຫ້ຂ້ານ້ອຍຜ່າຍແພ້ເລີຍ ພຣະອົງຊົງເປັນພຣະເຈົ້າທ່ຽງທັມ ຂ້ານ້ອຍອ້ອນວອນຫາພຣະອົງ ຂໍພຣະອົງຊົງຊ່ອຍໃຫ້ຂ້ານ້ອຍພົ້ນພັຍດ້ວຍ [2]ຂໍຊົງຟັງສຽງທູນຂໍຂອງຂ້ານ້ອຍ ແລະຊົງຊ່ອຍໃຫ້ຂ້ານ້ອຍພົ້ນພັຍໄວໆ ຂໍພຣະອົງຊົງເປັນທີ່ເພິ່ງແລະຄຸ້ມຄອງຂ້ານ້ອຍ ຂໍພຣະອົງຊົງເປັນເຄື່ອງປ້ອງກັນຊ່ອຍຂ້ານ້ອຍໃຫ້ພົ້ນພັຍ.*

ພວກເຮົາເຄີຍຂາດເຂີນຄຳແນະນຳໃນການກຳຈັດສີມູ່ຍ. ຄຳແນະນຳບາງຢ່າງເນັ້ນໜັກໃຫ້ຕິດແທດກັບຄົນອື່ນ: ຕົວຢ່າງ, ຈົ່ງໂອ້ລົມກັບເພື່ອນຫຼືຫຼິ້ນກັບໝາປະມານນຶ່ງຊົ່ວໂມງ. ຄຳແນະນຳອື່ນໆແນໃສ່ທາງກາຍ: ຈົ່ງອອກກຳລັງກາຍແບບທຳຮະທົດ, ດື່ມກາເຟ, ກິນອາຫານທະເລຕື່ມ, ແລະກິນຢາວິຕາມິນແລະແຫ່ທາດເສີມ. (ຂ້າພະເຈົ້າຂໍຢ້ຳອີກວ່າ ຄວາມຕົກຕໍ່າທາງແພດແຕກຕ່າງກັບຄວາມຕົກຕໍ່າຫຼືສີມູ່ຍທີ່ພວກເຮົາທຸກຄົນປະສົບມາ. ການດູແລທາງແພດຫຼືການສັ່ງຢາເປັນສິ່ງຈຳເປັນສຳລັບຫຼາຍຄົນທີ່ກຳລັງຈັດການກັບຄວາມຕົກຕໍ່າທາງການແພດ.) ຄຳແນະນຳທັງຫຼາຍນີ້ເປັນຄຳຄິດເຫັນບໍ່ວ່າພວກເຮົາຈະຮູ້ສຶກຕົກຕໍ່າຫຼືບໍ່. (ຂ້າພະເຈົ້າພຽງແຕ່ຫຼິ້ນກັບໝາວັນລະນຶ່ງຊົ່ວໂມງເທົ່ານັ້ນບໍ່). ໃນເມື່ອຄຳແນະນຳນີ້ເປັນຜົນດີຕໍ່ບາງຄົນແຕ່ບໍ່ເປັນຜົນດີຕໍ່ຄົນອື່ນ, ຂ້າພະເຈົ້າເຊື່ອໝັ້ນວ່າພວກເຮົາທຸກຄົນສາມາດປະຕິບັດຕາມແລະເກີດຜົນດີຈາກກິຈກັມດຽວຄື: <u>ວາງໃຈໃນພຣະເຈົ້າ</u>.

ໃນເພງສັດເສີນ, ດາວິດບໍ່ໄດ້ຕໍ່ສູ້ຄວາມຕົກຕໍ່າຢ່າງແຈ່ມແຈ້ງ, ແຕ່ວ່າ ພຣະອົງປະເຊີນກັບສະຖານະການທີ່ກົດໜ່ວງພຣະອົງຢ່າງໜັກ. ເຖິງແມ່ນວ່າພວກເຮົາບໍ່ແນ່ໃຈເຖິງສະຖານະການອັນແທ້ຈິງ, ນັກສຶກສາຫຼາຍຄົນຄິດວ່າ ກະສັດດາວິດຂຽນເພງສັດເສີນບົດນີ້ໃນເວລາລູກຂອງເພິ່ນ ອັບຊາໂລມ ກຳລັງພະຍາຍາມຍຶດຕຳແໜ່ງກະສັດ. ມີຫຼັກຖານຈາກການກຳສັບຂອງດາວິດແກ່ທະຫານຂອງພຣະອົງໃຫ້ປະຕິບັດຕໍ່ລູກຂອງພຣະອົງຢ່າງອ່ອນນ້ອມຊຶ່ງພຣະອົງຮັກອັບຊາໂລມຢ່າງເລິກເຊິ່ງ (2 ຊມອ 18:5). ພຣະອົງຮ້ອງໄຫ້ຢ່າງຂົມຂື່ນເມື່ອພຣະອົງຊາບວ່າອັບຊາໂລມເສັຽຊີວິດ (ຂໍ້ 33). ກ່ອນໜ້ານີ້, ກະສັດດາວິດປົບໜີເອົາຊີວິດລອດຈາກການຕາມລ່າຂອງລູກຊາຍພຣະອົງເອງ, ຜູ້ຊຶ່ງພຣະອົງຮັກ ແລະຫ່ວງໃຍ (ພສສ 17:21-22). ສະຖານະການຢ່າງນັ້ນບໍ່ເປັນພຽງແຕ່ການຂົ່ມຂູ່ພາຍນອກ; ກະສັດດາວິດຮູ້ສຶກໜັກໃຈທີ່ສຸດກັບສະຖານະການຂອງພຣະອົງ. ຂ້າພະເຈົ້າສາມາດເວົ້າກັບຕົວເອງວ່າ ຖ້າລູກຊາຍຄົນນຶ່ງໃນສອງຄົນຂອງຂ້າພະເຈົ້າກະບົດແລະໝາຍເອົາຊີວິດຂ້າພະເຈົ້າ, ຂ້າພະເຈົ້າຄົງປະສົບຄວາມຊອກຊ້ຳຍິ່ງກວ່າສີມູ່ຍອີກ!

**ມີສະພາບການໃດແດ່ທີ່ພະຍາຍາມຈ່ອງດຶງທ່ານລົງ?**

ກະສັດດາວິດບໍ່ໄດ້ສແວງຫາພຽງແຕ່ການເລົ້າໂລມ ໂດຍການນຳບັນຫາໄປຫາເພື່ອນ, ຫຼື ຈາກການລູບຄຳໝາ: ພຣະອົງເຂົ້າຫາພຣະເຈົ້າ. "ຂ້າແດ່ພຣະຜູ້ເປັນເຈົ້າ, ຂ້ານ້ອຍມາເພິ່ງພາອາສັຍພຣະອົງ." ບ່ອນລີ້ພັຍອາດໝາຍເຖິງໂງ່ນຫີນ, ທ່າເຮືອ, ຫຼືຕົວເມືອງ, ດາວິດຊາບດີວ່າພຣະເຈົ້າເທົ່ານັ້ນ ທີ່ສາມາດປະທານບ່ອນລີ້ພັຍທີ່ໝັ້ນຄົງແທ່ງດຽວທີ່ເພິ່ນຕ້ອງການ, ບໍ່ມີບ່ອນອື່ນ. ດາວິດຊາບວ່າພຣະເຈົ້າເປັນບ່ອນລີ້ພັຍຖາວອນ ແຫ່ງດຽວຂອງເພິ່ນ: "ພຣະອົງຊົງເປັນທີ່ກຳບັງແຫ່ງຊີວິດຂອງຂ້ານ້ອຍ" (ພສສ 27:1ຂ). ບໍ່ມີສິ່ງອື່ນໃດຫຼືຄົນອື່ນໃດສາມາດໃຫ້ການປົກປ້ອງຄຸ້ມຄອງດາວິດຈາກການເຮັດໃຫ້ເສັຽຊີ່ສຽງທີ່ພຣະເຈົ້າໄດ້ປະທານໃຫ້. ຂນະທີ່ເພິ່ນສແວງຫາພຣະເຈົ້າເພື່ອຄວາມປອດພັຍ, ດາວິດກໍໄດ້ທູນຂໍວ່າ "ຂໍພຣະອົງຊົງປົກປ້ອງຂ້ານ້ອຍດ້ວຍຄວາມຊອບທັມຂອງພຣະອົງ." ພວກເຮົາອາສັຍຢູ່ໃນໂລກແຫ່ງຄວາມອະທັມ. ໃນເພງສັດເສີນອີກບົດນຶ່ງ ດາວິດໄດ້ເອີ່ຍເຖິງຄວາມເສົ້າແທ້ຈິງນີ້. "ແຕ່ວ່າພວກເຂົາທຸກຄົນເຮັດໃນທາງຜິດແລະເປັນຄົນຊົ່ວ ໃນພວກເຂົາບໍ່ມີຜູ້ໃດເຮັດໃນສິ່ງຖືກຕ້ອງແມ່ນແຕ່ຜູ້ດຽວກໍບໍ່ມີ" (ພສສ 14:3). ເມື່ອໃດເຮົາພົບວ່າຕົນຕົກຢູ່ໃນເຫວແຫ່ງຄວາມຂັດສົນ, ບາງຄັ້ງເຮົາບໍ່ສາມາດຊ່ອຍຕົນເອງຂຶ້ນມາໄດ້. ພວກເຮົາບໍ່ມີຄວາມຊອບທັມຂອງຕົນເອງທີ່ຈະສາມາດອ້ອນວອນຂໍ. ແຕ່ພວກເຮົາສາມາດຊອກຫາພຣະເຈົ້າ. ພຣະເຈົ້າຈະນຳຄວາມຊອບທັມມາໃຫ້ທຸກຄົນທີ່ມອບຊີວິດຂອງເຂົາແດ່ພຣະເຢຊູຄຣິດ.

ບັນຫາແລະຄວາມກັງວົນຂອງທ່ານດາວິດອາດເປັນທີ່ໜັກໃຈຕໍ່ພຣະອົງຫຼາຍ, ແຕ່ ພຣະອົງຫຼຽວເບິ່ງພຣະເຈົ້າທີ່ພຣະອົງຮູ້ຈັກແລະວາງໃຈ. ສິ່ງໃດທີ່ຈ່ອງດຶງພຣະອົງລົງນັ້ນບໍ່ສາມາດທຽບກັບພຣະເຈົ້າຜູ້ຊອບທັມໄດ້. ດັ່ງທີ່ທ່ານດາວິດໄດ້ຮ້ອງໄຫ້ຫາພຣະເຈົ້າເພື່ອຂໍການຊ່ອຍເຫຼືອແລະເຂົ້າມາມີສ່ວນຢ່າງເປັນທັມ, ພວກເຮົາກໍສາມາດເຮັດໄດ້ຄືກັນ.

## 2. <u>ເພງສັດເສີນ 31:3-4</u>.

*3 ພຣະອົງຊົງເປັນບ່ອນເພິ່ງແລະປ້ອງກັນຂ້ານ້ອຍ ຂໍຊົງຊັກຈູງແລະນຳພາຂ້ານ້ອຍດັ່ງທີ່ພຣະອົງຊົງສັນຍາໄວ້*
*4 ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກບ້ວງແຮ້ວທີ່ເຂົາຫ້າງໃສ່ຂ້ານ້ອຍ ເພາະພຣະອົງເປັນທີ່ເພິ່ງອາສັຍຂອງຂ້ານ້ອຍ.*

ຄຳຂໍຮ້ອງຂອງດາວິດໃນຂໍ້ 4 ຂໍພຣະເຈົ້າ "ເປັນໂງ່ນຫີນລີ້ພັຍຂອງຂ້ານ້ອຍ, ເປັນປ້ອມປ້ອງກັນພັຍສຳລັບຂ້ານ້ອຍ," ນີ້ຍັງເຕືອນສະຕິເພິ່ນອີກວ່າພຣະເຈົ້າເປັນບ່ອນລີ້ພັຍຂອງເພິ່ນພໍແຮງແລ້ວ. ພຣະອົງຖແລງໃນ ຂໍ້ 3: "ພຣະອົງຊົງເປັນໂງ່ນຫີນແລະປ້ອມຮັກສາຂອງຂ້ານ້ອຍ." ການສແວງຫາພຣະເຈົ້າເປັນທີ່ເພິ່ງເປັນສິ່ງທີ່ດາວິດເຄີຍພົບມາຊ້ຳ

ແລ້ວຊ້ຳເຫຼົ້າ. ໃນຂະນະທີ່ພວກເຮົາໄດ້ຮັບການແນະນຳສູ່ທ່ານດາວິດໃນ 1 ຊາມູເອັນ 16, ພວກເຮົາເຫັນຊາຍໜຸ່ມຜູ້ນີ້ງທີ່ວາງໃຈໃນພຣະເຈົ້າ. ຄວາມຈິງ, ແມ້ກະທັ້ງກ່ອນດາວິດເຂົ້າໄປໃນພາບ, ພຣະເຈົ້າໄດ້ປະກາດຜ່ານຊາມູເອັນກ່ອນແລ້ວວ່າ, "ພຣະຜູ້ເປັນເຈົ້າຈະສົ່ງຊາຍຜູ້ນຶ່ງທີ່ພຣະອົງຊົງພໍພຣະທັຍ ແລະຈະຊົງແຕ່ງຕັ້ງໃຫ້ລາວປົກຄອງໄພ່ພົນຂອງພຣະອົງ" (1 ຊມອ 13:14). ເມື່ອຊາຍໜຸ່ມຜູ້ນີ້ທີ່ພໍພຣະທັຍພຣະເຈົ້າຢືນຢູ່ຕໍ່ໜ້າກະສັດຊາອູນແລະມອບໝາຍໃຫ້ໄປຕໍ່ສູ້ໂກລີອາດ ລາວເວົ້າວ່າ "ພຣະຜູ້ເປັນເຈົ້າໄດ້ຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກສິງແລະໝີ ພຣະອົງກໍຈະຊ່ອຍຂ້ານ້ອຍໃຫ້ພົ້ນຈາກຊາຍຟີລິສຕິນຄົນນີ້ໄດ້" (1 ຊມອ 17:37).

ພຣະເຈົ້າປະທານບຳເນັດແກ່ດາວິດດ້ວຍໄຊຊະນະ, ແລະລາວກໍຖືກເລື່ອນຊັ້ນຂຶ້ນໃນຕຳແໜ່ງຄົນຂອງກະສັດຊາອູນຢ່າງວ່ອງໄວ. ແຕ່ການໄວ້ໃຈຂອງດາວິດກໍຖືກນຳໄປທົດສອບຕໍ່ໄປ. ດາວິດຮູ້ດີວ່າລາວຈະໄດ້ເປັນກະສັດ-ແທ້ຈິງ, ທຸກຄົນກໍຊາບດີແລ້ວວ່າດາວິດຈະໄດ້ເປັນກະສັດ!-ດັ່ງນັ້ນ ເມື່ອດາວິດໄດ້ຮັບຂໍ້ສເນີໂອກາດຂ້າກະສັດຊາອູນຢ່າງຮີບດ່ວນແລະງ່າຍດາຍ, ລາວປະຕິເສດທີ່ຈະລົງມື (1 ຊມອ 24:1-22). ດາວິດຈະບໍ່ເຮັດດ້ວຍມືລາວເອງ; ແທນທີ່ຈະລົງມືເອງ, ລາວວາງໃຈພຣະເຈົ້າເປັນຜູ້ນຳການປົດປ່ອຍແລະຕຳແໜ່ງກະສັດມາໃຫ້ລາວຕາມເວລາຂອງພຣະອົງ.

ດາວິດບໍ່ໄດ້ເປັນຄົນສົມບູນແບບ. ເພິ່ນເປັນຄົນບາບຢ່າງອາໝາດເວລາພຣະອົງສົມສູ່ກັບເບັດເຊບາ ແລະຕໍ່ຈາກນັ້ນໄດ້ຂ້າຜົວຂອງນາງ ເພື່ອປົກປິດບາບຂອງພຣະອົງ (2 ຊມອ 11:1-27). ດາວິດຄວນແລ່ນຫາພຣະເຈົ້າເປັນທີ່ເພິ່ງເພື່ອເວັ້ນຈາກການທົດລອງ. ດາວິດບໍ່ຄວນແກ້ບັນຫາດ້ວຍມືພຣະອົງເອງ. ຄວາມພະຍາຍາມແກ້ໄຂບັນຫາດ້ວຍຕົນເອງກໍມີແຕ່ຈະເຮັດໃຫ້ບັນຫາໜັກຂຶ້ນຕື່ມ. ແຕ່ເມື່ອນາທານປະເຊີນໜ້າກັບດາວິດ, ກະສັດກໍສຳນຶກໃນຄວາມຜິດທີ່ຕົນໄດ້ກະທຳ (2 ຊມອ 12:1-14) ແລະລະນຶກເຖິງຜູ້ຊອບທັມຊຶ່ງເປັນທີ່ເພິ່ງຂອງພຣະອົງ, ແລະດາວິດເຂົ້າຫາພຣະເຈົ້າເພື່ອສາຣະພາບຜິດ. ພຣະອົງສຳນຶກໃນພຣະຄຸນແລະຄວາມສັດຊື່ຂອງພຣະເຈົ້າແລ້ວໄດ້ຖ່ອມຕົນກັບໃຈ.

ດຽວນີ້ດາວິດປະເຊີນກັບການທ້າທາຍແນວໃໝ່, ເພິ່ນຕ່າວຄືນມາຫາພຣະເຈົ້າຜູ້ຊົງເປັນບ່ອນລີ້ພັຍແລະເປັນປ້ອມກຳບັງຂອງເພິ່ນອີກ. ເພິ່ນກ່າວດ້ວຍຄວາມໝັ້ນໃຈວ່າ, "ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກບ້ວງແຮ້ວທີ່ເຂົາຫ້າງໃສ່ຂ້ານ້ອຍເພາະພຣະອົງເປັນທີ່ເພິ່ງອາສັຍຂອງຂ້ານ້ອຍ" (ຂໍ້ 4). ບາງຄັ້ງເປັນການງ່າຍທີ່ "ອະທິຖານ" ແລະວາງໃຈພຣະເຈົ້າຕໍ່ບັນຫາທີ່ເຮົາເຫັນລ່ວງໜ້າທີ່ກຳລັງຄືບຄານເຂົ້າມາຕາມທາງ. ແຕ່ບາງຄັ້ງພວກເຮົາຖືກກະທົບດ້ວຍຄວາມປມາດ. ໃນໄລຍະນັ້ນ, ເປັນການສລາດທີ່ລະນຶກວ່າພຣະເຈົ້າຜູ້ຊົງຮັກເຮົາແລະຊົງເປັນໂງ່ນຫີນແລະເປັນປ້ອມກຳບັງຂອງເຮົາໃນອະດີດນັ້ນ ຍັງເປັນທີ່ອາສັຍໃນປັດຈຸບັນນີ້ເໝືອນເດີມ.

| |
|---|
| ມີທາງບໍ່ເໝາະສົມໃດແດ່ທີ່ທ່ານເຫັນຄົນນຳມາແກ້ໄຂຄວາມຕົກຕ່ຳ? |

## 3.ເພງສັຣເສີນ 31:5-8.

*5 ຂ້ານ້ອຍຂໍມອບຕົວໄວ້ໃນການພິທັກຮັກສາຂອງພຣະອົງ ຂ້າແດ່ພຣະເຈົ້າ ພຣະອົງຈະຕ້ອງຊ່ອຍຂ້ານ້ອຍໃຫ້ພົ້ນພັຍ*
*ເພາະພຣະອົງຊົງເປັນພຣະເຈົ້າອົງສັດຊື່ 6 ພຣະອົງຊົງກຽດຊັງຜູ້ທີ່ຂາບໄຫວ້ຮູບໂຄຣົບ ແຕ່ຂ້ານ້ອຍເຊື່ອພຣະອົງ*
*7 ຂ້ານ້ອຍຈະຊົມຊື່ນຍິນດີ ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ ພຣະອົງຊົງຫຼຽວເຫັນຄວາມທຸກທໍຣະມານຂອງຂ້າ*
*ນ້ອຍພຣະອົງຊົງຮູ້ຈັກຄວາມທຸກລຳບາກຂອງຂ້ານ້ອຍ 8 ພຣະອົງບໍ່ໄດ້ຊົງອະນຸຍາດໃຫ້ສັດຕຣູຊະນະຂ້ານ້ອຍແຕ່ຊົງ*
*ຮັກສາຂ້ານ້ອຍໃຫ້ປອດພັຍ.*

| |
|---|
| *ຄວາມຈິງແລະຄວາມຮັກທຳງານຮ່ວມກັນຢ່າງໃດເພື່ອປ້ອງກັນຫຼືດຶງເຮົາອອກຈາກຄວາມຕົກຕ່ຳ?* |

ຈົ່ງຟັງເບິ່ງຄວາມເຊື່ອຢ່າງເດັດຂາດແລະຢ່າງໝົດໃຈໃນຄຳເວົ້າຂອງທ່ານດາວິດ: "ຂ້ານ້ອຍຂໍມອບຕົວໄວ້ໃນພຣະຫັດຂອງພຣະອົງ." ດາວິດໄດ້ເລືອກມອບຕົວໄວ້ໃນພຣະຫັດຂອງພຣະເຈົ້າແທ້ໆ. ມີຫຍັງມາແລະມີຫຍັງເກີດຂຶ້ນ,

ຊີວິດຂອງດາວິດໄດ້ຢູ່ໃນພຣະຫັດພຣະເຈົ້າ-ແລະບໍ່ມີບ່ອນຢູ່ອື່ນທີ່ດີກວ່ານີ້. ພຣະເຢຊູໄດ້ກ່າວຄຳດຽວກັນນີ້ທີ່ໄມ້ກາງແຂນ. ດັ່ງຄວາມທໍຣະມານ, ຄວາມເຈັບປວດ, ແລະການຖວາຍຕົວເພື່ອຄວາມບາບຂອງພວກເຮົາໄດ້ມາເຖິງການສລຸບ, ຄຳເວົ້າສຸດທ້າຍທີ່ພຣະເຢຊູໄດ້ຮ້ອງກ່ອນສິ້ນພຣະຊົນສຽງດັງແລະແຈ່ມແຈ້ງ: ແລ້ວພຣະເຢຊູຊົງຮ້ອງສຽງດັງກ່າວວ່າ, "ພຣະບິດາເອີຍ, ຂ້ານ້ອຍຂໍຝາກຈິດວິນຍານຂອງຂ້ານ້ອຍໄວ້ໃນພຣະຫັດຂອງພຣະອົງ" (ລູກາ 23:46). ພຣະເຢຊູສຳເຣັດພາຣະກິດຂອງພຣະອົງໃນການສເດັດມາເຮັດໃຫ້ສຳເຣັດໃນໂລກນີ້; ພຣະອົງເຂົ້າໄປໃນຄວາມທຸກທໍຣະມານຂອງໄມ້ກາງແຂນ, ແລະດ້ວຍພາຣະກິດຂອງພຣະອົງໃນໂລກນີ້ໄດ້ສຳເຣັດແລ້ວ (ຢຮ 19:38), ພຣະອົງໄດ້ຊົງມອບຊີວິດຂອງພຣະອົງໄວ້ໃນພຣະຫັດຂອງພຣະບິດາ.

ພວກເຮົາຊາບແລ້ວວ່າ ພວກເຮົາວາງໃຈໃນພຣະເຈົ້າແທ້ໆ-ບໍ່ພຽງແຕ່ຖວາຍການນະມັສການດ້ວຍຮີມສົບເທົ່ານັ້ນ-ໃນເວລາຄວາມເຊື່ອຂອງເຮົານຳເຮົາສັຣເສີນພຣະເຈົ້າ. ເວລາທ່ານດາວິດຂຽນຂໍ້ຄວາມນີ້, ເພິ່ນຍັງບໍ່ທັນວາງໃຈແລະຍັງບໍ່ຮູ້ວ່າພຣະເຈົ້າຈະປົດປ່ອຍເທື່ອ. ທ່ານດາວິດສາມາດ "ຊື່ນຊົມແລະຍິນດີໃນຄວາມຮັກອັນສັດຊື່ຂອງພຣະອົງ" ໃນສາມເຫດຜົນ:

- "ພຣະອົງຊົງຫຼຽວເຫັນຄວາມທຸກທໍຣະມານຂອງຂ້ານ້ອຍ."
- "ພຣະອົງຊົງຮູ້ຈັກຄວາມທຸກລຳບາກຂອງຂ້ານ້ອຍ".
- "ພຣະອົງບໍ່ໄດ້ຊົງອະນຸຍາດໃຫ້ສັດຕຣູຊະນະຂ້ານ້ອຍ".
- "ແຕ່ໄດ້ຊົງຮັກສາຂ້ານ້ອຍໃຫ້ປອດພັຍ".

ໄລຍະເວລາສິ້ນຫວັງແລະຕົກຕໍ່າ, ພວກເຮົາອາດຮູ້ສຶກວ່າບໍ່ມີໃຜສົນໃຈແລະຫ່ວງໃຍ, ແຕ່ພຣະເຈົ້າຊົງເຫັນແລະຮູ້ຈັກ-ແລະພຣະອົງຫ່ວງໃຍ. ໃນໄລຍະເວລາທີ່ເຮົາຢູ່ໃນສະພາບຂັບຂັນກໍຈະມີແຕ່ ຄວາມຄິດທໍ້ແທ້ແລະຄວາມຮູ້ສຶກຫຸ້ມລ້ອມເຮົາຢູ່, ໃຫ້ເຮົາຈຳໄວ້ວ່າພຣະເຈົ້າຈະຊົງປົດປ່ອຍຜູ້ທີ່ສແວງຫາພຣະອົງສເມີບໍ່ວ່າສະພາບໃດກໍຕາມ. ພຣະອົງຈະຊົງປົດປ່ອຍເຮົາໃຫ້ເປັນອິສຣະອອກຈາກບ່ອນທີ່ເຮົາຄິດທໍ້ແທ້ແລະພາເຮົາໄປສູ່ສະຖານທີ່ພິເສດ.

| |
|---|
| ບາດກ້າວໃດທີ່ກຸ່ມຂອງພວກເຮົາຈະໃຊ້ຍົກຊູຊຶ່ງກັນແລະກັນຂຶ້ນໃນເວລາຂັດສົນ? |

## ນຳໃຊ້ໃນຊີວິດ

ທ່ານຈະຕອບສນອງຕໍ່ການວາງໃຈໃນພຣະເຈົ້າຢ່າງໃດ? ຈົ່ງເລືອກນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ການນະມັສການ.** ການວາງໃຈສແດງອອກໃນຂນະທີ່ທ່ານນະມັສການເພາະວ່າມັນເຮັດໃຫ້ທ່ານສຸມໃສ່ພຣະຄຣິດ. ຈົ່ງຕັດສິນໃຈຕິດພັນກັບການນະມັສການຢ່າງຈິງຈັງ ທັງກັບຄຣິສຕະຈັກແລະເຝົ້າດຽວໃນຊີວິດຂອງທ່ານ.
- **ການສຶກສາ.** ຈົ່ງຍົກຂໍ້ພຣະຄັມພີທີ່ສອນສິ່ງທີ່ພຣະເຈົ້າຕຣັດກ່ຽວກັບກໍຣະນີການຕົກຕໍ່າແລະຄວາມເສົ້າໃນຊີວິດເຮົາ ເພື່ອເຮົາສາມາດແບ່ງປັນກັບຄົນອື່ນໆ.
- **ຈົ່ງຊອກຫາການຊ່ອຍເຫຼືອ.** ຈົ່ງປະເມີນຕົນຢ່າງຈິງຈັງກ່ຽວສາເຫດການຕົກຕໍ່າໃນຊີວິດທ່ານ. ຈົ່ງຍອມຮັບວ່າມັນເປັນຈິງແລະຈິງຈັງ. ມັນອາດເປັນເວລາທີ່ຈະຕ້ອງເວົ້າກັບເພື່ອນໃກ້ຊິດ, ສິດຍາພິບານ, ຫຼືທີ່ປຶກສາໃນເຣື່ອງນີ້.

ມີຄຳພັງເພີຍທີ່ຄືວ່າດີແລະຊຶ່ງຄົນຢາກເວົ້າໃຫ້ກັນຟັງສຳລັບເຫດຜົນທີ່ຖືກຕ້ອງທຸກຢ່າງ. ແຕ່ອົງພຣະຜູ້ເປັນເຈົ້າຜູ້ດຽວທີ່ສາມາດຍົກຊູເຮົາຂຶ້ນໃນເວລາເຮົາຮູ້ສຶກຕົກຕໍ່າລົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**